# ບົດຂ່າວພິທີເປີດການນຳໃຊ້ລະບົບບໍລິການພາກລັດປະຕູດຽວ (Gov-X)

================================

ໃນຕອນເຊົ້າຂອງ ວັນທີ 28 ສິງຫາ 2023, ກະຊວງເຕັກໂນໂລຊີ ແລະ ການສື່ສານ (ຕສ) ຮ່ວມກັບ ອົງການສະຫະປະຊາຊາດເພື່ອການພັດທະນາ (ອົງການ UNDP) ປະຈຳ ສປປ ລາວ ໄດ້ຈັດພິທີເປີດການ ນຳໃຊ້ລະບົບບໍລິການພາກລັດປະຕູດຽວ (Gov-X) ຂຶ້ນ ທີ່ໂຮງແຮມ ຄຣາວພລາຊ່າ, ນະຄອນຫຼວງວຽງ ຈັນ. ໃຫ້ກຽດເປັນປະທານເປີດພິທີ ໂດຍ ທ່ານ ບັນດິດ ສຈ ບໍ່ວຽງຄຳ ວົງດາລາ, ລັດຖະມົນຕີ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ໂດຍມີຄະນະຜູ້ບໍລິຫານຈາກອົງການ UNDP ປະຈຳ ສປປ ລາວ , ບັນດາທ່ານ ຄະນະລັດຖະມົນຕີ, ຫົວໜ້າ ແລະ ຄະນະຫ້ອງການ ຈາກບັນດາກະຊວງ ແລະ ອົງ ການຈັດຕັ້ງທຽບເທົ່າ, ຕາງໜ້າຈາກສະຖານທູດ, ອົງການຈັດຕັ້ງສາກົນ, ບັນດາບໍລິສັດໂທລະຄົມ, ຄະນະ ຫ້ອງການ ແລະ ກົມ/ທຽບເທົ່າ ຂອງກະຊວງ ຕສ ແລະ ບໍລິສັດຜູ້ພັດທະນາລະບົບ ບໍລິການພາກລັດປະຕູ ດຽວ (Gov-X) ເຂົ້າຮ່ວມທັງໝົດ 130 ກວ່າທ່ານ.

ລະບົບບໍລິການພາກລັດປະຕູດຽວ (Gov-X) ເປັນລະບົບທີ່ພັດທະນາຂຶ້ນ ພາຍໃຕ້ໂຄງການສະໜັບສະໜຸນ ການຫັນເປັນລັດຖະບານດິຈິຕອນ ທີ່ໄດ້ຮັບທຶນຊ່ວຍເຫຼືອລ້າຂອງ ອົງການ UNDP ເຊິ່ງພາຍໃຕ້ໂຄງການ ຊ່ວຍເຫຼືອດັ່ງກ່າວ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ (ກຕສ) ກໍ່ໄດ້ສຳເລັດການສຳຫຼວດ ແລະ ປະເມີນຄວາມພ້ອມຂອງການຫັນເປັນລັດຖະບານດິຈິຕອນ (DMA – Digital Maturity Assessment) ບັນດາກະຊວງ ແລະ ແຂວງ/ນະຄອນຫຼວງ ທົ່ວປະເທດ ເຮັດໃຫ້ສາມາດຮັບຮູ້ໄດ້ເຖິງຄວາມພ້ອມຂອງ ສປປ ລາວ ໃນການທີ່ຈະຫັນພາກລັດເປັນດິຈິຕອນ ແລະ ປະຈຸບັນ ກຳລັງຮ່າງແຜນແມ່ບົດຫັນເປັນ ລັດຖະບານດິຈິຕອນ (Digital Government Master Plan) ເພື່ອໃຫ້ຮູ້ໄດ້ເຖິງໜ້າວຽກຈຸດສຸມທີ່ພັກ-ລັດ ຈະຕ້ອງໄດ້ສຸມໃສ່ໃນໄລຍະ 5 ປີຕໍ່ໜ້າ. ພ້ອມນັ້ນ, ໃນໂຄງການຮ່ວມມືດັ່ງກ່າວ, ກະຊວງ ຕສ ໄດ້ ຮ່ວມມືກັບ UNDP ໃນການພັດທະນາ ໂຄງການລິເລີ່ມ ບໍລິການພາກລັດປະຕູດຽວ ຫຼື Gov-X ຊຶ່ງໄດ້ ເຮັດວຽກຮ່ວມມກັບ UNDP ແລະ ຂະແໜງການກ່ຽວຂ້ອງ ເປັນຕົ້ນ ກະຊວງສາທາລະນະສຸກ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງ ສຶກສາທິການ ແລະ ກິລາ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງ ໂຍທາທິການ ແລະ ຂົນສົ່ງ ໃນການພັດທະນາ ແລະ ເຊື່ອມໂຍ່ງ ບັນດາບໍລິການ ພາກລັດ ເຂົ້າກັບລະບົບ Gov-X.

Gov-x ເປັນລະບົບສູນລວມຂໍ້ມູນ ແລະ ການບໍລິການຂອງພາກລັດ ເພື່ອສ້າງເງື່ອນໄຂໃຫ້ ປະຊາຊົນ, ທຸລະກິດ ແລະ ພະນັກງານທີ່ເຮັດການບໍລິການສາທາລະນະ ໃນການເຂົ້າຫາຂໍ້ມູນ ແລະ ການບໍລິການ ຂອງພາກລັດຜ່ານປະຕູດຽວ ເທິງເຄື່ອງໂທລະສັບມືຖືສະມາດໂຟນ, ໂດຍປະກອບມີລະບົບບໍລິການເບື້ອງ ຕົ້ນດັ່ງນີ້:

- ***ລະບົບລົງທະບຽນເລກໝາຍໂທລະສັບດ້ວຍຕົນເອງ (3 ແກຣັບ)***, ແມ່ນແອັບທີ່ໃຫ້ປະຊາຊົນສາມາດລົງທະບຽນເລກໝາຍໂທລະສັບດ້ວຍຕົນເອງໄດ້ຜ່ານລະບົບອອນລາຍ ຕະຫຼອດ 24 ຊົ່ວໂມງ.
- ***ລະບົບກວດສອບຂໍ້ມູນບັດປະກັນສັງຄົມ (LSSO)*** ເຊິ່ງຜູ້ນຳໃຊ້ບໍລິການສາມາດເຂົ້າໄປກວດສອບຂໍ້ມູນບັດປະກັນສັງຄົມຂອງຕົນໂດຍການປ້ອນລະຫັດບັດເຂົ້າແລ້ວ ລະບົບຈະສະແດງຂໍ້ມູນພື້ນຖານປະກັນສັງຄົມເຊັ່ນ: ຊື່ໂຮງໝໍ ແລະ ຂໍ້ມູນປະກັນສັງຄົມຂອງຄອບຄົວ.
- ***ລະບົບຄັງປັນຍາລາວ*** ເປັນລະບົບສື່ການສອນແບບອອນລາຍ, ຜູ້ໃຊ້ສາມາດເຂົ້າໄປຮຽນວິຊາຕ່າງໆ ຕັ້ງແຕ່ລະດັບ ປ1 ໄປຈົນຮອດ ມ7 ແລະ ມີຫຼັກສູດສຳລັບການເພີ່ມທັກສະໃນການສອນໃຫ້ກັບອາຈານ ໂດຍບໍ່ເສຍຄ່າ.
- ***ລະບົບລວມສູນແບບຟອມ ແລະ ເອກະສານທາງການ*** ເພື່ອໃຫ້ປະຊາຊົນ ສາມາດ download ແລ້ວປະກອບເອກະສານ ຕ່າງໆ ໄດ້ຢ່າງວ່ອງໄວ ໂດຍບໍ່ຈຳເປັນເດີນທາງໄປປ່ອງບໍລິການ.
- ***ລະບົບຂໍ້ມູນວິສາຫະກິດແຫ່ງຊາດ (NED)*** ເພື່ອກວດສອບທະບຽນວິສາຫະກິດຂອງບັນດາບໍລິສັດວິສາຫະກິດ, ບໍລິສັດ ແລະ ຫ້າງຮ້ານຕ່າງໆ ວ່າໄດ້ຈົດທະບຽນວິສາຫະກິດແລ້ວຫຼືບໍ່.
- ***ລະບົບໃບຂັບຂີ່ດິຈິຕອນ (e-Driving License)*** ເພື່ອລົງທະບຽນໃບຂັບຂີ່ໃຫ້ເປັນຮູບແບບດິຈິຕອນ , ປະຈຸບັນ ແມ່ນກຳລັງດຳເນີນການປະສານສົມທົບກັບກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ໃນການເຊື່ອມຕໍ່ຂໍ້ມູນກັບລະບົບຖານຂໍ້ມູນໃບຂັບຂີ່.

ລະບົບ Gov-X ຈະເປັນຊ່ອງທາງໃນການໂຄສະນາ, ສົ່ງເສີມ ແລະ ຊຸກຍູ້ໃຫ້ປະຊາຊົນມີການນຳໃຊ້ລະບົບຕ່າງໆທີ່ທາງພາກລັດໄດ້ເປີດໃຫ້ບໍລິການ, ເປັນລະບົບທີ່ຮວບຮວມເອົາບັນດາລະບົບຕ່າງຂອງພາກລັດທີ່ບໍລິການໃຫ້ປະຊາຊົນໄວ້ຢູ່ບ່ອນດຽວ ເພື່ອໃຫ້ປະຊາຊົນສາມາດເຂົ້າເຖິງບໍລິການຕ່າງໆໄດ້ງ່າຍດ້ວຍແອັບດຽວ ຊຶ່ງສາມາດດາວໂຫຼດໄດ້ທີ່ App Store ແລະ Play Store ແລະ ຍັງມີຫຼາຍການບໍລິການຂອງພາກລັດທີ່ຈະເຊື່ອມໂຍ່ງຕື່ມໃນອານາຄົດ.